**BCEL ຮ່ວມກັບ OceanBase ຍົກລະດັບດ້ານດິຈິຕອນຂອງທະນາຄານ ສູ່ຄວາມທັນສະໄໝ**




ໃນວັນທີ 20 ສິງຫາ 2026 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ແລະ ບໍລິສັດ OceanBase ເຊັນ MOU ຮ່ວມກັນຢ່າງເປັນທາງການ ທີ່ສຳນັກງານໃຫຍ່ BCEL.

ໃຫ້ກຽດລົງນາມໂດຍ ທ່ານ ບັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການ BCEL ແລະ Mr. Alex Fan Shuyu, (SVP & GM of Business Unit, OceanBase Singapore).

ການຮ່ວມມືຄັ້ງນີ້ ເປັນຂີດໝາຍສຳຄັນຕາມແຜນຍຸດທະສາດ 5 ປີ (2025–2029) ຂອງ ທຄຕລ ໃນການຫັນໄປສູ່ທັນສະໄໝ ນຳໃຊ້ເຕັກໂນໂລຊີ Distributed Database ລຸ້ນໃໝ່ ເພື່ອຍົກລະດັບໂຄງລ່າງພື້ນຖານ Core Banking ຮັບປະກັນຄວາມໝັ້ນຄົງ, ປອດໄພ ແລະ ຮອງຮັບການບໍລິການແກ່ລູກຄ້າຕະຫຼອດ 24/7.

ຜ່ານການທົດລອງລະບົບຮ່ວມກັບ OceanBase ແລະ HiSun ໃນຕົ້ນປີ 2026 ເຫັນວ່າລະບົບສາມາດຮອງຮັບທຸລະກຳມະຫາສານໄດ້ຢ່າງວ່ອງໄວ, ການປະມວນຜົນທ້າຍມື້ໄວຂຶ້ນ ແລະ ມີຄວາມສະຖຽນສູງ.

ຮອງຮັບຍຸກເສດຖະກິດດິຈິຕອນ ທັງເປັນການກຽມຄວາມພ້ອມດ້ານສະຖາປັດຕະຍະກຳໄອທີ ເພື່ອສົ່ງມອບປະສົບການທາງການເງິນທີ່ທັນສະໄໝ, ວ່ອງໄວ, ປອດໄພ ແລະ ມີຄວາມໜ້າເຊື່ອຖືທີ່ສຸດໃຫ້ແກ່ລູກຄ້າ.

…………………………………………….

**BCEL Partners with OceanBase to Drive the Bank's Digital Transformation**




On 20 August 2026, Banque Pour Le Commerce Extérieur Lao Public (BCEL) and OceanBase officially signed a Memorandum of Understanding (MOU) at BCEL Head Office.

The agreement was signed by Mr. Nanthalath Keopaseuth, Deputy Managing Director of BCEL, and Mr. Alex Fan Shuyu, SVP & GM of Business Unit, OceanBase Singapore.

This collaboration marks a key milestone under BCEL's 5-Year Strategic Plan (2025–2029), as the bank moves toward modernization by adopting next-generation Distributed Database technology to strengthen its Core Banking infrastructure — ensuring greater stability, security, and uninterrupted 24/7 service for customers.

Following a joint Proof of Concept (PoC) with OceanBase and HiSun earlier in 2026, the system demonstrated the ability to handle massive transaction volumes with speed, faster end-of-day processing, and high system stability.

This partnership positions BCEL for the digital economy era, reinforcing the bank's IT architecture readiness to deliver a modern, fast, secure, and highly reliable financial experience for its customers.